# ບົດນຳສະເໜີ ການແລກປ່ຽນບົດຮຽນ ການສົ່ງເສີມປູກໝາກແໜ່ງ ກວາງຕຸ້ງ ຢູ່ ເມືອງສຳພັນ

# ສະພາບລວມຂອງເມືອງ

- ເມືອງສຳພັນ ຕັ້ງຢູ່ທາງທິດຕາເວັນອອກສ່ຽງໃຕ້ ຂອງແຂວງຜົ້ງສາລີ ຫ່າງຈາກເທດສະບານແຂວງ ປະມານ 197 Km (ທາງປາກປອກ),
- ມີຊາຍແດນຕິດກັບ 5 ເມືອງຄື: ເມືອງຜົ້ງສາລີ, ບຸນໃຕ້, ເມືອງຂວາ, ເມືອງໃໝ່ ແລະ ເມືອງແຢ ແຫ່ງ ສສ ຫວຽດນາມ,
- ເມືອງສຳພັນປະກອບມີຫຼາຍເຜົ່າຊົນ ທີ່ມີອາຊີບ, ການເຊື່ອຖື, ຮີດຄອງປະເພນີທີ່ແຕກຕ່າງກັນ ເຊິ່ງມີ 6 ເຜົ່າຄື: ເຜົ່າລາວລຸ່ມ 6.40%, ເຜົ່າກຶມມຸ 31.4%, ເຜົ່າອາຄາ 44.32%, ເຜົ່າມົ້ງ 11.39%, ພູນ້ອຍ 4.98% ແລະ ເຜົ່າສີລາ 1.48%.
- ເມືອງສຳພັນປະກອບມີ 64 ບ້ານ, ມີ 10 ກຸ່ມບ້ານພັດທະນາ, ມີ 3,948 ຄົວເຮືອນ, ມີ 5,013 ຄອບຄົວ, ມີປະຊາກອນທັງໝົດ 24,328 ຄົນ, ຍິງ 12,064 ຄົນ,
- ເມືອງສຳພັນ ມີເນື້ອທີ່ 260,445 ເຮັກຕາ, ໃນນີ້ມີເນື້ອທີ່ປ່າໄມ້ 137,027 ຮຕ= 53.4 % (ເນື້ອທີ່ປ່າປົກຫຸ້ມ), ເນື້ອທີ່ດິນກະສິກຳມີ 104,955 ຮຕ ກວມເອົາ 41,6% .

# ສະພາບການສົ່ງເສີມປູກໝາກແໜ່ງຢູ່ເມືອງສຳພັນ

- ໃນຊຸມປີ 2001 ຄືນຫຼັງ ປະຊາຊົນສ່ວນຫຼາຍແມ່ນອາໄສເກັບກູ້ແຕ່ໝາກແໜ່ງປ່າໃນແຕ່ລະປີ ເຊິ່ງມີ 2 ຊະນິດ ຄື ໝາກແໜ່ງແດງ ແລະ ໝາກແໜ່ງຂຽວ.
- ປີ 2002 ທາງໂຄງການ ລາວ-ອາເມລິກາ ແລະ ໂຄງການອີຢູ ກໍ່ໄດ້ ສະໜັບ-ສະໜູນທຶນຮອນສຳລັບການສົ່ງເສີມປູກໝາກແໜ່ງພັນກວາງຕຸ່ງ ແຕ່ຍັງບໍ່ທັນຂະຫຍາຍຕົວ ແລະ ບໍ່ໄດ້ຮັບການເອົາໃຈໃສ່ຈາກປະຊາຊົນ .
- ປີ 2011-12 ລາຄາໝາກແໜ່ງເລີ່ມດີຂຶ້ນ ປະຊາຊົນຈຶ່ງເລີ່ມຫັນມາສົນໃຈ ກັບຄືນປົວລະບັດຮັກສາສວນໝາກແໜ່ງ .
- ປີ 2013 ທົ່ວເມືອງມີລາຍຮັບປະມານ 6 ຕື້ກວ່າກີບ ໃນລາຄາໝາກແໜ່ງສະເລ່ຍ 250,000 ກີບ/ກິໂລແຫ້ງ.
- ປີ 2014 ມີລາຍຮັບປະມານ 13 ຕື້ ກວ່າກີບ(ໃນລາຄາສະເລ່ຍ 450,000 ກີບ/ກິໂລແຫ້ງ),
- ປີ 2015, ມີຜົນຜະລິດປະມານ 38 ໂຕນແຫ້ງ, ມີລາຍຮັບປະມານ 12 ຕື້ ກວ່າກີບ(ໃນລາຄາສະເລ່ຍ 320,000 ກີບ/ກິໂລແຫ້ງ).

# ບ້ານ ແລະ ຄອບຄົວຜົ້ນເດັ່ນໃນການປູກໝາກແໜ່ງ

- ເມືອງສຳພັນມີຫຼາຍບ້ານທີ່ປູກໝາກແໜ່ງ ໂດຍໄດ້ຮັບທຶນສະໜັບ-ສະໜູນຈາກອົງການຈັດຕັ້ງສາກົນ ແລະ ທຶນຮອນຂອງປະຊາຊົນເອງ ໃນນີ້ບ້ານທີ່ຜົນເດັ່ນແມ່ນ: ບ້ານມົກພະ ເຊິ່ງເລີ່ມປູກໝາກແໜ່ງມາແຕ່ປີ 2004 ດ້ວຍທຶນປະຊາຊົນເອງ. ເລີ່ມເກັບກູ້ຜົນຜະລິດມາແຕ່ປີ 2010 ແຕ່ຍັງບໍ່ທັນຜົນເດັ່ນ, ຮອດປີ 2013 ມີລາຍຮັບປະມານເຂົ້າບ້ານ ປະມານ 300 ກວ່າລ້ານ, ປີ 2014 ມີລາຍຮັບປະມານ 1,5 ຕື້ ກວ່າກີບ ແລະ ປີ 2015, ມີລາຍຮັບປະມານ 1,3 ຕື້ກວ່າກີບ, ມີບ້ານລາວປານ2 ກຸ່ມມູຈີກາງ: ປີ 2014 ມີລາຍຮັບປະມານ 1.6 ຕື້ກວ່າ, ປີ 2015 1.2 ຕື້ກວ່າກີບ.
- ນອກຈາກນີ້ມີຫຼາຍຄອບຄົວທີ່ມີລາຍຮັບຜົນເດັ່ນຈາກການຂາຍຜົນຜະລິດໝາກແໜ່ງ ໃນນີ້ເດັ່ນ ກວ່າໝູ່ແມ່ນ: ທ ເພັງ ໄຊຍະສຸກ ປະຊາຊົນບ້ານ ມົກພະ ມີລາຍຮັບຈາກການຂາຍຜົນຜະລິດໝາກແໜ່ງ ແຕ່ 100-150 ລ້ານ/ປີ (ໃນຊ່ວງໄລຍະ 3 ປີ 2013-15), ທ ແອ ບ້ານມົກພະ ມີລາຍຮັບ 100-180 ລ້ານ(ໃນໄລຍະປີ 2014-15), ທ ຄຳພາ ບ້ານ ລາວປານ2 ມີລາຍຮັບແຕ່ 50-100 ລ້ານ ໃນໄລຍະ 3 ປີ 2013-15 ແລະ ຄອບຄົວອື່ນໆ .

# ດ້ານບັນຫາ ແລະ ອຸປະສັກໃນການປູກໝາກແໜ່ງ

ເຖິງຢ່າງໃດກໍ່ດີ ການສົ່ງເສີມປູກໝາກແໜ່ງ ພວກເຮົາກໍ່ຍັງປະເສີນກັບບັນຫາຫຼາຍຢ່າງ ທັງເປັນປັດໃຈພາຍໃນ, ພາຍນອກ, ເຊິ່ງເປັນອຸປະສັກ ແລະ ສິ່ງທ້າທາຍ ຕໍ່ການປູກໝາກແໜ່ງ ດັ່ງນີ້ :

- ການປູກໝາກແໜ່ງແມ່ນປູກໃສ່ພື້ນທີ່ປ່າຫ່ວງຫ້າມ (ໃນ 3 ປະເພດປ່າ) .
- ທາງເມືອງ ຍັງບໍ່ທັນມີວິຊາການສະເພາະດ້ານກ່ຽວກັບ ເຕັກນິກການປູກໝາກແໜ່ງ, ນອກຈາກນີ້ ທາງພວກເຮົາກໍ່ຍັງບໍ່ທັນໄດ້ສຶກສາ, ວິໄຈລະອຽດກ່ຽວກັບນິເວດວິທະຍາຂອງໝາກແໜ່ງ ວ່າມີຄວາມເໝາະສົມກັບສະພາບທ້ອງຖິ່ນແນວໃດ .
- ການປູກໝາກແໜ່ງຂອງປະຊາຊົນ ແມ່ນປູກຕາມບົດຮຽນ ແລະ ປະສົບການຕົວຈິງຂອງເຂົາເຈົ້າ.
- ໝາກແໜ່ງ ເປັນພືດອາຍຸສັ້ນ, ບວກໃສ່ກັບ ເປັນພືດທີ່ຂ້ອນຂ້າງເລືອກພື້ນທີ່ປູກ ເຮັດໃຫ້ມີຄວາມສ່ຽງໃນການຈັດສັນອາຊີບຄົງທີ່, ສ້າງລາຍຮັບອັນໝັ້ນຄົງຂອງປະຊາຊົນ.
- ດ້ານການຕະຫຼາດ: ຜົນຜະລິດໝາກແໜ່ງແມ່ນສົ່ງອອກຈີນໂດຍກົງ(ຕະຫຼາດຜູກຂາດ), ມີຕະຫຼາດ ແຕ່ປະຊາຊົນຍັງບໍ່ຮູ້ການຕະຫຼາດ .

# ບົດຮຽນທີ່ຖອດຖອນໄດ້-ທິດທາງການສົ່ງເສີມປູກໝາກແໜ່ງໃນຕໍ່ໜ້າ

- ຊຸກຍູ້ສົ່ງເສີມໃຫ້ປະຊາຊົນໃນທົ່ວເມືອງ ສືບຕໍ່ປູກ ແລະ ຂະຫຍາຍພື້ນທີ່ຕາມເງື່ອນໄຂ ແລະ ຄວາມອາດສາມາດ, ທ່າແຮງຂອງແຕ່ລະທ້ອງຖິ່ນ ຕິດພັນກັບການປົກປັກຮັກສາ ແລະ ອະນຸລັກຊີວະນາໆພັນ ໂດຍສະເພາະໃນຂອບເຂດ ປ່າສະຫງວນ, ປ່າປ້ອງກັນ, ປ່າຜະລິດ.
- ຕ້ອງໄດ້ສຶກສາ ແລະ ວິໄຈລະບົບນິເວດຂອງໝາກແໜ່ງ, ມີຄວາມເໝາະສົມແນວໃດ, ລວມທັງສຶກສາແນວພັນໝາກແໜ່ງກວາງຕຸ້ງຊະນິດໃດແທ້ ທີ່ເໝາະສົມກັບແຕ່ລະທ້ອງຖິ່ນ.
- ຕ້ອງສ້າງວິຊາການສະເພາະດ້ານ ນັບແຕ່ວິຊາການຂັ້ນເມືອງ ລົງເຖິງຂັ້ນບ້ານ .
- ຕ້ອງມີການຕັດແຕ່ງ, ປັບປຸງສວນໝາກແໜ່ງເປັນປົກກະຕິ ແຕ່ຕ້ອງນຳເອົາເຕັກນິກເຂົ້າຊ່ວຍ ວ່າຕ້ອງຕັດແຕ່ງ, ບົວລະບັດຮັກສາແນວໃດ .
- ຕ້ອງໄດ້ຈັດຕັ້ງກຸ່ມຊາວກະສິກອນ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ຊາວກະສິກອນ, ສ້າງຄວາມສາມາດໃຫ້ປະຊາຊົນ ໃນການປັບປຸງຄຸນນະພາບຜົນຜະລິດໝາກແໜ່ງໃຫ້ດີຂຶ້ນ, ພ້ອມທັງສ້າງຄວາມສາມາດໃນການແປຮູບໝາກແໜ່ງໃນລະດັບ ເພີ່ມສ້າງມູນຄ່າເພີ່ມ.
- ຕ້ອງມີຖານຂໍ້ມູນ ກ່ຽວກັບການຕະຫຼາດໝາກແໜ່ງ ໂດຍສະເພາະທາງດ້ານລາຄາ, ສ້າງຕົວແທນ ເຮັດໃຫ້ປະຊາຊົນສາມາດເຂົ້າຫາຕະຫຼາດໂດຍກົງ ໂດຍທີ່ຕັດວົງຈອນພໍ່ຄ້າຍ່ອຍຫຼືພໍ່ຄ້າຄົນກາງອອກ.

# ຂໍ້ສະເໜີເພື່ອແລກປ່ຽນບົດຮຽນ

1. ພວກເຮົາມີວິທີການແນວໃດ? ເພື່ອປັບປຸງເຕັກນິກດ້ານການປູກໝາກແໜ່ງ .
2. ພວກເຮົາຄວນສ້າງວິຊາການສະເພາະດ້ານ ກ່ຽວກັບການປູກໝາກແໜ່ງແນວໃດ, ຄວນເອົາບົດຮຽນ, ເອກະສານອ້າງອີງ ຈາກບ່ອນໃດມາເປັນບົດຮຽນ, ເປັນບ່ອນອີງໃນການຈັດຕັ້ງປະຕິບັດຢູ່ຂັ້ນທ້ອງຖິ່ນເຮົາ .
3. ພວກເຮົາຈະມີການປັບປຸງຄຸນນະພາບຜົນຜະລິດໝາກແໜ່ງແນວໃດ, ມີວິທີການໃດເພື່ອໃຫ້ປະຊາຊົນ ສາມາດແປຮູບຜົນຜະລິດໝາກແໜ່ງໃນລະດັບໃດໜຶ່ງ ເພື່ອສ້າງມູນຄ່າເພີ່ມ ຈົນກ້າວໄປສູ່ ການສ້າງເປັນຜະລິດຕະພັນສະເພາະທີ່ສາມາດນຳອອກສູ່ຕະຫຼາດໃນລະດັບພາກພື້ນ ໂດຍສະເພາະຕະຫຼາດ ອາຊີ ຫຼື ເອີ້ນວ່າສ້າງເປັນສິນຄ້າ Otop ສູ່ຕະຫຼາດ AEC ມີຄວາມເປັນໄປໄດ້, ຫຼື ມີໂອກາດຫຼາຍ-ໜ້ອຍພຽງໃດ .
4. ການປູກໝາກແໜ່ງໃນ 3 ປະເພດປ່າ ມີຜົນກະທົບຕໍ່ຊີວະນາໆພັນແນວໃດ, ມີວິທີການໃດທີ່ເຮົາຄວນປັບປຸງ ຖ້າປູກໃນພື້ນທີ່ດັ່ງກ່າວ .
5. ສະເໜີໂຄງການ TABI ສືບຕໍ່ຜັນຂະຫຍາຍຜົນການຈັດຕັ້ງປະຕິບັດ ສູ່ບັດດາເມືອງ ໂດຍສະເພາະ ແມ່ນເມືອງສຳພັນ .

# ການສົ່ງເສີມປູກໝາກແໜ່ງ





28/10/2015






29/10/2015









# ຂໍຂອບໃຈ